# ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2
# ພັດທະນາຊຸມຊົນຄຽງຄູ່ກັບການຜະລິດກະແສໄຟຟ້າ

ໃນວັນທີ 18 ກຸມພາ 2010 ທີ່ຜ່ານມາ, ຢູ່ທີ່ ຫ້ອງປະຊຸມໃຫຍ່ ກະຊວງພະລັງງານ ແລະ ບໍ່ແຮ່, ຄະນະຊ່ຽວຊານສາກົນດ້ານສັງຄົມ ແລະ ສິ່ງແວດລ້ອມ ຊຶ່ງເປັນທີ່ປຶກສາຂອງລັດຖະບານລາວ ປະຈຳໂຄງການເຂື່ອນໄຟຟ້ານ້ຳເທີນ 2 ໄດ້ຈັດກອງປະຊຸມເພື່ອລາຍງານຜົນການມາປະຕິບັດວຽກ ຕິດຕາມກວດກາໂຄງການ ຄັ້ງທີ 16, ແຕ່ວັນທີ 1 ຫາ 17 ກຸມພາ 2010, ຕໍ່ພາກສ່ວນ ທີ່ກ່ຽວຂ້ອງໃນໂຄງການນ້ຳເທີນ 2 ຊຶ່ງລວມມີ: ລັດຖະບານລາວ, ບໍລິສັດໄຟຟ້ານ້ຳເທີນ 2, ຜູ້ມີສ່ວນຮ່ວມຝ່າຍອື່ນໆ ແລະ ບັນດາສະຖາບັນການເງິນທີ່ໃຫ້ທຶນເຊັ່ນ: ທະນາຄານໂລກ, ທະນາຄານພັດທະນາອາຊີ, ອົງການພັດທະນາແຫ່ງປະເທດຝຣັ່ງ.

ການລົງເຮັດວຽກຂອງຄະນະຊ່ຽວຊານຄັ້ງນີ້ ແມ່ນເພື່ອກວດກາຕິດຕາມວ່າພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຢູ່ໃນໂຄງການນ້ຳເທີນ 2 ໄດ້ປະຕິບັດພັນທະຂອງຕົນຕາມສັນຍາສຳປະທານຂອງໂຄງການ ຊຶ່ງໄດ້ສ້າງຂຶ້ນບົນພື້ນຖານ ເພື່ອຮັບປະກັນວ່າໂຄງການນ້ຳເທີນ 2 ໄດ້ບັນລຸເປົ້າໝາຍໃນມາດຕະຖານລະດັບສູງດ້ານວຽກສັງຄົມ ແລະ ສິ່ງແວດລ້ອມ.

ໂຄງການນ້ຳເທີນ 2 ຈະເລີ່ມຕົ້ນກ້າວເຂົ້າສູ່ໄລຍະການຜະລິດໄຟຟ້າຂາຍຢ່າງເປັນທາງການ ໃນເວລາອັນໃກ້ນີ້, ແຕ່ໂຄງການກໍ່ຍັງຈະສືບຕໍ່ປະຕິບັດວຽກເພື່ອຮັບປະກັນວ່າແຜນປະຕິບັດງານ ເພື່ອໃຫ້ເປັນຕົວແບບດ້ານວຽກງານສັງຄົມ ແລະ ສິ່ງແວດລ້ອມ ແມ່ນຍັງຈະດຳເນີນຕາມແຜນຕະຫຼອດໄລຍະການດຳເນີນການຜະລິດຂອງໂຄງການ.
ບໍລິສັດໄຟຟ້ານ້ຳເທີນ 2 ຄາດວ່າ ຈະເລີ່ມການຂາຍໄຟຟ້າ ໃນອັດຕາທຸລະກິດໃນອະນາຄົດໃກ້ໆນີ້ ແລະ ວາງແຜນຈະຈັດພິທີສະຫຼອງການເປີດເຂື່ອນຢ່າງເປັນທາງການ ຮ່ວມກັບລັດຖະບານ ພາຍຫຼັງທີ່ດຳເນີນການຜະລິດ ໄຟຟ້າຂາຍໄປໄດ້ໄລຍະໃດໜຶ່ງ. ມື້ເປີດຜະລິດໄຟຟ້າຂາຍຢ່າງເປັນທາງການນີ້ ກໍຈະເປັນມື້ສິ້ນສຸດຂອງວຽກກໍ່ສ້າງເຂື່ອນ ແລະ ພ້ອມທັງ

ເປັນມື້ເລີ່ມຕົ້ນຂອງໄລຍະສໍາປະທານຜະລິດໄຟຟ້າ 25 ປີ ຂອງບໍລິສັດໄຟຟ້ານໍ້າເທີນ 2, ແຕ່ເຖິງຢ່າງໃດກໍ່ຕາມ, ກໍ່ຍັງຈະສືບຕໍ່ ການປະຕິບັດວຽກງານປົກປັກຮັກສາສິ່ງແວດລ້ອມ ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນເຂດໂຄງການຢ່າງຕໍ່ເນື່ອງ. ເຊັ່ນດຽວກັນ, ແຜນພັດທະນາສັງຄົມຢູ່ເຂດພູພຽງນາກາຍ ແລະ ເຂດລຸ່ມເຂື່ອນ ແມ່ນຍັງຈະດໍາເນີນຕໍ່ໄປ, ໃນຂະນະດຽວກັນ ກໍ່ໄດ້ມີການຮັບປະກັນວ່າ ຈະມີການສະໜອງທຶນອີກເປັນເວລາ 25 ປີ ໃຫ້ແກ່ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫຼ່ງນໍ້າໂຄງການນໍ້າເທີນ 2.

ອໍານາດການປົກຄອງທ້ອງຖິ່ນຂອງແຂວງຄໍາມ່ວນ ແລະ ແຂວງບໍລິຄໍາໄຊ ໄດ້ຮັບເອົາບັນດາສາທາລະນຸປະໂພກ ຈາກໂຄງການນໍ້າເທີນ 2 ແລ້ວເປັນແຕ່ລະໄລຍະ. ຕົວຢ່າງ ໃນເດືອນ ມັງກອນທີ່ຜ່ານມາ ຊັບສິນທີ່ມີມູນຄ່າຫຼາຍກວ່າ 67 ລ້ານໂດລາສະກາລັດ ໄດ້ຖືກມອບໂອນ ໃຫ້ແກ່ອໍານາດການປົກຄອງເມືອງນາກາຍ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ໃນນາມຕາງໜ້າລັດຖະບານລາວ. ຊັບສິນເລົ່ານີ້ລວມມີ ທົນທາງ, ແລະ ອາຄານສິ່ງປຸກສ້າງ ເພື່ອຊ່ວຍຊຸມຊົນທີ່ຖືກຍົກຍ້າຍຈັດສັນໃຫ້ສາມາດປັບປຸງຊີວິດການເປັນຢູ່ດີຂຶ້ນກ່ວາເກົ່າ ແລະ ທັງເປັນການສ້າງເງື່ອນໄຂດໍາລົງຊີວິດປະຈໍາວັນດີຂຶ້ນ.

ຄະນະຊ່ຽວຊານປະກອບ 3 ທ່ານ ຄື: ທ່ານ ລີ ຕານບົດ, ທ່ານ ທາເຢີ ສະກັດເດີ ແລະ ທ່ານ ເດວິດ ແມັກໂດແວວ. ດ້ວຍຄວາມຊ່ຽວຊານສະສົມມາຢ່າງຍາວນານ ໃນດ້ານການອະນຸລັກ, ສິ່ງແວດລ້ອມວິທະຍາ, ມະນຸດວິທະຍາ ພ້ອມທັງປະສົບການອັນຫຼວງຫຼາຍ ໃນວຽກງານພັດທະນາ ໂຄງການອຸດສາຫະກໍາຂະໜາດໃຫຍ່ ແລະ ການວາງແຜນມາດຕະການບັນເທົາຜົນກະທົບຂອງໂຄງການ, ທັງສາມທ່ານໄດ້ນໍາໃຊ້ສິ່ງເຫຼົ່ານີ້ ມາສ້າງຜົນປະໂຫຍດອັນມະຫາສານໃຫ້ແກ່ໂຄງການນໍ້າເທີນ 2 ໂດຍການ ສະເໜີບັນຫາທີ່ເກີດຂຶ້ນໃນແຕ່ລະໄລຍະການກໍ່ສ້າງໂຄງການ ແລະ ໃຫ້ຄໍາແນະນໍາວິທີການແກ້ໄຂຕໍ່ກັບບັນຫານັ້ນໆ ເພື່ອປັບປຸງການຈັດຕັ້ງປະຕິບັດວຽກງານສັງຄົມ ແລະ ສິ່ງແວດລ້ອມ່ຂອງໂຄງການໃຫ້ມີປະສິດຕິພາບສູງ.

ໃນກອງປະຊຸມຄັ້ງນີ້, ທ່ານ ສີຈາດ ບຸດຊາກິດຕິລາດ, ຮອງຫົວໜ້າກົມສົ່ງເສີມ ແລະ ພັດທະນາພະລັງງານ ໄດ້ກ່າວຕໍ່ຜູ້ເຂົ້າຮ່ວມປະຊຸມວ່າ ລັດຖະບານ ແລະ ບໍລິສັດໄຟຟ້ານໍ້າເທີນ 2 ຕີລາຄາສູງ ຕໍ່ຄໍາແນະນໍາຂອງຄະນະຊ່ຽວຊານ ແລະ ຖືເປັນສິ່ງທີ່ມີຄວາມໝາຍສໍາຄັນໃຫ້ແກ່ການຈັດຕັ້ງປະຕິບັດໂຄງການຢ່າງຖືກຕ້ອງ ຕາມເປົ້າໝາຍຕົ້ນຕໍຂອງຕົນ ຄືການຕອບສະໜອງຊີວິດການເປັນຢູ່ທີ່ດີຂຶ້ນໃຫ້ແກ່ປະຊາຊົນທ້ອງຖິ່ນ ແລະ ການສ້າງກົນໄກການປ້ອງກັນສິ່ງແວດລ້ອມແບບຍືນຍົງ.

ທ່ານ ສີຈາດ ຍັງໄດ້ກ່າວຕື່ມອີກວ່າ ການຈັດຕັ້ງປະຕິບັດໂຄງການທີ່ມີເປົ້າໝາຍປະສົບຜົນສໍາເລັດໃນໄລຍະຍາວບໍ່ເຄີຍເປັນເລື່ອງທີ່ງ່າຍດາຍຈັກເທື່ອ ດ້ວຍສາຍເຫດນີ້ເອງຜູ້ຈັດຕັ້ງປະຕິບັດໂຄງການຈຶ່ງຕ້ອງໄດ້ອາໃສການຊ່ວຍເຫຼືອຂອງອົງການອິດສະຫຼະ ເພື່ອໃຫ້ທິດທາງແກ່ການຈັດຕັ້ງປະຕິບັດໂຄງການຂອງພວກເຂົາ.